**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ກົມປ່າໄມ້

ເລກທີ: 1951 /ກປມ

ນະຄອນຫຼວງວຽງຈັນ, ວັນທີ: 07 APR 2025

# ໜັງສືແຈ້ງເຊີນປະມູນ

1. ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງ ພາຫະນະປະເພດລົດຈິບ SUV car (4WD) ຈຳນວນ 01 ຄັນ ແລະ ປະເພດລົດກະບະ Pick up car (4WD) ຈຳນວນ 04 ຄັນ. ໄລຍະການຈັດສົ່ງແມ່ນ **120** ວັນ ພາຍຫຼັງທີ່ໄດ້ເຊັນສັນຍາ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ ໃນ ສປປ ລາວ, ມີໃບທະບຽນວິສາຫະກິດ, ມີເລກປະຈຳຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກ ຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ (020 9295 9696, 020 7777 6392), ກົມປ່າໄມ້ ສຳນັກງານຕັ້ງຢູ່ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-12:00 ແລະ 13:30-16:00 ໂມງ;
5. ເອກະສານຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ໂດຍການຍື່ນໜັງສືສະເໜີຫາ ພະແນກ ຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການ ທຳລາຍປ່າໄມ້, ກົມປ່າໄມ້, **ນັບແຕ່ວັນທີ 10 ເມສາ 2025 ຫາ 15 ພຶດສະພາ 2025** ໃນລາຄາຊອງປະມູນ ຊອງລະ 500,000 ກີບ (ສອງແສນກີບຖ້ວນ) ເງິນຈຳນວນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນ ຕ້ອງສົ່ງທີ່ຫ້ອງປະຊຸມໃຫຍ່ຊັ້ນ 2 ຂອງກົມປ່າໄມ້ ຖະໜົນສາຍລົມ, ບ້ານ ສີສະເກດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໃນເວລາ ຫຼື ກ່ອນເວລາ **14:00 ໂມງ** ຂອງວັນທີ **15 ພຶດສະພາ 2025**. ຊອງປະມູນທີ່ສົ່ງທາງເອເລັກໂທນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ **14:00** ໂມງ ຂອງວັນທີ **15 ພຶດສະພາ 2025** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນ ການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ເຂົ້າຮ່ວມການປະມູນ ໃນຄັ້ງນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້
ກົມປ່າໄມ້

ຮສ.ປອ. ສົມຫວັງ ພິມມະວົງ